ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 511 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 6 / 12 /2012

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດຕ້ານການສໍ້ລາດບັງຫຼວງ ຮອດປີ 2020

- ອີງຕາມກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບ ເລກທີ 03/ສພຊ, ລົງວັນທີ 19 ພຶດສະພາ 2005.

- ອີງຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບ ເລກທີ 02/ສພຊ, ລົງວັນທີ 02 ກໍລະກົດ 2007.

- ອີງຕາມມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກັນຍາ 2012, ສະບັບເລກທີ 10 /ລບ, ລົງວັນທີ 09/10/2012 .

## ນາຍົກລັດຖະມົນຕີອອກດຳລັດ

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ຍຸດທະສາດຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 02 / ນຍ ລົງວັນທີ 04 / 12 / 2012.

ມາດຕາ 2 : ມອບໃຫ້ອົງການກວດກາລັດຖະບານ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດຕ້ານການສໍ້ລາດບັງຫຼວງສະບັບນີ້.

ມາດຕາ 3 : ບັນດາກະຊວງ - ອົງການ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ມີຜົນເປັນຢ່າງດີ.

ມາດຕາ 4 : ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

ທອງສິງ ທຳມະວົງ